Multicultural HIV/AIDS and Hepatitis C Service

NSW HEALTH

NSW Health Factsheet - Lao

# ເຈັ້ຍຂໍ້ມູນຄວາມກ່ຽວພັນລະຫວ່າງ TB ແລະ HIV

*The connection between TB and HIV*

ອັນນີ້ແມ່ນເຈັ້ຍຂໍ້ມູນກ່ຽວກັບວັນນະໂຣກ (TB) ແລະ ໄວຣັສທີ່ເຮັດໃຫ້ເກີດໂຣກພູມຕ້ານທານບົກພ່ອງໃນມະນຸດ (HIV) ຊຶ່ງເປັນໄວຣັສທີ່ກໍ່ໃຫ້ເກີດໂຣກພູມຕ້ານທານບົກພ່ອງ (AIDS). ຄົນທີ່ມີ HIV ຈະເປັນຜູ້ມີທາງທີ່ຈະປ່ວຍດ້ວຍການຕິດເຊື້ອໂຣກແລະພະຍາດອື່ນໆຫຼາຍກວ່າຜູ້ອື່ນ. TBແມ່ນນຶ່ງຂອງບັນດາພະຍາດເຫຼົ່ານັ້ນ. ຖ້າທ່ານໄດ້ ກວດພົບວ່າເປັນໂຣກ TB ຫຼື ຖ້າທ່ານມີໂຣກ HIV, ເຈັ້ຍຂໍ້ມູນນີ້ແມ່ນສຳລັບທ່ານ.

ມີຄົນປະມານ 40ລ້ານຄົນທີ່ຢູ່ກັບໂຣກ HIV ຫຼື AIDS, ປະມານ 13ລ້ານຄົນທີ່ຍັງມີໂຣກ TB ອີກນຳ. ການກວດພົບແຕ່ເບື້ອງຕົ້ນເປັນສິ່ງສຳຄັນຖ້າຫາກທ່ານມີທັງໂຣກ HIV ແລະTB ເພື່ອວ່າທ່ານຈະໄດ້ເລີ້ມການປິ່ນປົວທັງ ໂຣກ HIV ແລະTB. ຖ້າຫາກວ່າການຕິດເຊື້ອໂຣກທັງສອງຢ່າງນີ້ບໍ່ໄດ້ຮັບການປິ່ນປົວ ມັນກໍອາດຈະຮວມ ກັນເຮັດໃຫ້ເກີດເປັນພະຍາດທີ່ຮ້າຍແຮງທີ່ສຸດໄດ້.

## ພາກ 1: ວັນນະໂຣກ (TB)

### TB ແມ່ນຫຍັງ?

TB ແມ່ນເກີດມາຈາກແບັກທີເຣັຍ (ເຊື້ອໂຣກ). ມັນເປັນພະຍາດທີ່ປົກກະຕິແລ້ວຈະກະທົບກະເທືອນຕໍ່ປອດ ແຕ່ວ່າມັນກໍສາມາດກະທົບກະເທືອນສ່ວນຕ່າງໆຂອງຮ່າງກາຍໄດ້ ເຊັ່ນ ສມອງ ໝາກໄຂ່ຫຼັງ ຫຼື ກະດູກສັນຫຼັງ. TB ສາມາດເຄື່ອນໄຫວຢູ່ໃນຮ່າງກາຍ ຫຼື ແອບແຝງ (ນອນ) ຢູ່. ຖ້າບໍ່ໄດ້ຮັບການປິ່ນປົວ, TB ທີ່ເຄື່ອນໄຫວໄດ້ສາມາດກໍ່ໃຫ້ເກີດມີບັນຫາສຸຂພາບທີ່ຮ້າຍແຮງ ຫຼື ແມ່ນແຕ່ເສັຍຊີວິດໄດ້.

### TB ແຜ່ພາຍໄດ້ແບບໃດ?

ແບັກທີເຣັຍ TB (ເຊື້ອໂຣກ) ແຜ່ຂຍາຍຈາກຄົນນຶ່ງໄປຫາອີກຄົນນຶ່ງໂດຍທາງອາກາດ ແລະ ຕາມປົກກະຕິແລ້ວມັນຈະແຜ່ຂຍາຍໃນເມື່ອຜູ້ທີ່ມີໂຣກ TB ຊຶ່ງຢູ່ໃນຣະຍະເຄື່ອນໄຫວ ໄອ, ທົ່ວ, ຈາມ ຫຼື ຮ້ອງເພງ. ຜູ້ໃດທີ່ຢູ່ໃກ້ກໍສາມາດຫາຍໃຈເອົາແບັກທີເຣັຍ TB ເຫຼົ່ານີ້ເຂົ້າໄປແລະກໍຈະຕິດໂຣກ TB. ໂຣກTB ບໍ່ ແຜ່ຂຍາຍດ້ວຍການໃຊ້ເຄື່ອງໃຊ້ໃນເຮືອນ ຈອກ ຫຼື ຈານຮ່ວມກັນ ຫຼື ໂດຍທາງນ້ຳລາຍໃນເວລາຈູບຄົນໃດຄົນນຶ່ງ.

### ແມ່ນຫຍັງແມ່ນອາການຂອງໂຣກ TB ທີ່ເຄື່ອນໄຫວ?

ສ່ວນຫຼາຍ ຜູ້ທີ່ມີໂຣກ TB ທີ່ເຄື່ອນໄຫວຈະ:

| | |
|---|---|
| • ຮູ້ສຶກອ່ອນເພັຍ ຫຼື ເປັນໄຂ້<br>• ນ້ຳໜັກຫຼຸດໄວ<br>• ມີອາການໄອ (ບາງຄັ້ງມີເລືອດ) ແລະ ເຈັບໜ້າເອິກ | • ມີອາການໄຂ້ ແລະ<br>• ມີເຫື່ອອອກຕອນກາງຄືນ<br>• ຫຼື ບາງຄັ້ງກໍບໍ່ມີອາການໃດໆ |

### ແມ່ນຫຍັງຄື ຄວາມແຕກຕ່າງລະຫວ່າງໂຣກ TB ເຄື່ອນໄຫວ ແລະ ໂຣກ TB ແຝງ?

ຜູ້ທີ່ມີໂຣກTB ເຄື່ອນໄຫວຈະເປັນໄຂ້ຈາກເຊື້ອ ໂຣກTBຈຳນວນຫຼາຍທີ່ເຄື່ອນໄຫວຢູ່ໃນຮ່າງ ກາຍຂອງພວກເຂົາ. ຜູ້ທີ່ມີໂຣກTB ແຝງກໍມີແບັກທີເຣັຍທີ່ກໍ່ໃຫ້ເກີດໂຣກTBເຄື່ອນໄຫວ ແຕ່ວ່າພວກເຂົາຈະບໍ່ເປັນໄຂ້ເພາະວ່າເຊື້ອແບັກທີເຣັຍນັ້ນແອບແຝງ(ນອນ) ຢູ່ໃນຮ່າງກາຍຂອງພວກເຂົາ.

| ຖ້າທ່ານມີໂຣກ TBເຄື່ອນໄຫວ ໝາຍຄວາມວ່າທ່ານ: | ຖ້າທ່ານມີໂຣກ TBແຝງ ໝາຍຄວາມວ່າທ່ານ: |
|---|---|
| • ມີເຊື້ອແບັກທີເຣັຍເຄື່ອນໄຫວຢູ່ໃນຮ່າງກາຍຂອງທ່ານ<br>• ເປັນໄຂ້ ແລະ ທ່ານອາດມີອາການຕ່າງໆເຊັ່ນ ໄອ, ຄີງຮ້ອນ, ນ້ຳໜັກຫຼຸດ, ເມື່ອຍເພັຍແລະມີ ເຫື່ອອອກຕອນກາງຄືນ<br>• ອາດຈະສາມາດແຜ່ຂະຫຍາຍເຊື້ອແບັກທີເຣັຍ TB ໄປຫາຄົນອື່ນ<br>• ສາມາດກິນຢາເພື່ອປິ່ນປົວພະຍາດໃຫ້ເຊົາ | • ມີເຊື້ອແບັກທີເຣັຍTBແຕ່ມັນບໍ່ເຄື່ອນໄຫວ<br>• ບໍ່ເປັນໄຂ້<br>• ບໍ່ສາມາດແຜ່ຂະຫຍາຍເຊື້ອແບັກທີເຣັຍໄປຫາຄົນອື່ນ<br>• ສາມາດກິນຢາເພື່ອປ້ອງກັນບໍ່ໃຫ້ກາຍເປັນໂຣກTB ເຄື່ອນໄຫວໄດ້ໃນຂ້າງໜ້າ |

## ພາກ 2: ໄວຣັສທີ່ເຮັດໃຫ້ເກີດໂຣກພູມຕ້ານທານ ບົກຜ່ອງ (HIV)

### HIV ແມ່ນຫຍັງ?

HIV ແມ່ນໄວຣັສທີ່ສາມາດກໍ່ໃຫ້ເກີດ AIDS. ເຊື້ອHIV ໂຈມຕີລະບົບພູມຕ້ານທານຂອງຮ່າງກາຍ. ຖ້າທ່ານໄດ້ຕິດເຊື້ອ HIV ແລ້ວ ທ່ານກໍຈະຖືກເອີ້ນວ່າເປັນຜູ້ມີ HIVທາງບວກ. ອັນນີ້ໝາຍຄວາມວ່າ HIV ໄດ້ເຂົ້າໄປສູ່ເສັ້ນເລືອດຂອງທ່ານແລ້ວ.

### ເຊື້ອHIV ແຜ່ຂະຫຍາຍໄດ້ແບບໃດ?

ເຊື້ອHIV ຈະຫາພົບໄດ້ໃນຂອງແຫຼວໃນຮ່າງກາຍເຊັ່ນ ເລືອດ, ນ້ຳອະສຸຈິ ແລະ ນ້ຳເມືອກຂອງຊ່ອງຄອດ ແລະ ນ້ຳນົມ. ການຕິດເຊື້ອHIV ສາມາດ ເກີດຂຶ້ນໄດ້ກໍ່ຕໍ່ເມື່ອຂອງແຫຼວໃນຮ່າງກາຍນຶ່ງຊນິດຫຼືຫຼາຍກວ່າຂອງຜູ້ທີ່ມີເຊື້ອຢູ່ແລ້ວຜ່ານເຂົ້າໄປສູ່ເສັ້ນເລືອດຂອງອີກຄົນນຶ່ງເທົ່ານັ້ນ.

ເຊື້ອHIV ສາມາດແຜ່ຂະຫຍາຍໄດ້ໂດຍທາງທີ່ກ່າວຢູ່ຂ້າງລຸ່ມນີ້ເທົ່ານັ້ນ:

- ມີເພດສຳພັນໂດຍບໍ່ໃຊ້ຖົງຢາງອະນາໄມ (ມີເພດສຳພັນທີ່ບໍ່ປອດໄພ)
- ໃຊ້ເຂັມ, ຫຼອດຢາ ແລະ ອຸປກອນສັກຢາອື່ນໆ ຮ່ວມກັນ
- ຈາກແມ່ຫາລູກໃນຂນະທີ່ຖືພາ ຄອດລູກ ຫຼື ໃຫ້ລູກກິນນົມແມ່.
- ການປູ່ນເລືອດ ແລະ/ຫຼື ຜລິດຕະພັນເລືອດ (ໃນ ອອສເຕຣເລັຍນີ້ ຜລິດຕະພັນເລືອດໄດ້ຖືກກວດຄັດກອງເບິ່ງເຊື້ອ HIV ມາຕັ້ງແຕ່ປີ 1985)

ເຊື້ອ HIVບໍ່ສາມາດແຜ່ຂະຫຍາຍໄດ້ໂດຍທາງ: ໄອ, ຈູບ, ຈາມ,ຖົ່ມນ້ຳລາຍ,ໄຫ້, ໃຊ້ຖ້ວຍຊາມ, ຜ້າປູບ່ອນນອນ,ສ້ວມຖ່າຍ,ຫ້ອງອາບນ້ຳຮ່ວມກັນ ຫຼື ການຕ້ອງຊູນກັນແບບທັມມະດາຢ່າງໃດນຶ່ງ.

### ອາການຂອງເຊື້ອ HIV ມີຫຍັງແດ່?

ທ່ານບໍ່ສາມາດບອກໄດ້ວ່າໃຜຜູ້ນຶ່ງມີເຊື້ອ HIV ດ້ວຍພຽງແຕ່ການເບິ່ງເທົ່ານັ້ນ. ຜູ້ທີ່ມີເຊື້ອ HIVສ່ວນຫຼາຍຈະເບິ່ງຄືມີສຸຂພາບດີ ແລະ ຈະບໍ່ມີອາການໃດໆເລີຍ. ມັນອາດຈະໃຊ້ເວລາຫຼາຍປີ ກ່ອນທີ່ອາການໃດນຶ່ງຈະເລີ້ມປະກົດອອກມາໃຫ້ ເຫັນ ແລະ ຫຼາຍໆຄົນທີ່ມີເຊື້ອ HIVເອງກໍຈະບໍ່ຮູ້ຄືກັນ.

### ແມ່ນຫຍັງຄືຄວາມແຕກຕ່າງລະຫວ່າງ HIV ແລະ AIDS?

HIV ໂຈມຕີລະບົບພູມຕ້ານທານຂອງຮ່າງກາຍ. ຖ້າຫາກວ່າບໍ່ໄດ້ຮັບການປິ່ນປົວ ເຊື້ອHIVກໍຈະ ທຳລາຍລະບົບພູມຕ້ານທານຊຶ່ງຈະເຮັດໃຫ້ບໍ່ສາມາດຕໍ່ສູ້ກັບການຕິດເຊື້ອໂຣກທັມມະດາໄດ້ ແລະ ຄົນໆນັ້ນກໍຈະມີຄວາມສ່ຽງຕໍ່ຄວາມເຈັບປ່ວຍແລະເຖິງຂັ້ນເສັຍຊີວິດໄດ້. ສະພາບການແບບນີ້ເປັນທີ່ຮູ້ກັນວ່າເປັນໂຣກ AIDS - ໂຣກພູມຕ້ານທານບົກຜ່ອງ.

| ຖ້າທ່ານມີເຊື້ອ HIV ໝາຍຄວາມວ່າທ່ານ: |
|---|
| • ທ່ານມີໄວຣັສທີ່ກໍ່ໃຫ້ເກີດໂຣກ AIDS<br>• ອາດຈະບໍ່ມີອາການໃດໆ<br>• ສາມາດປິ່ນປົວໄດ້ |

## ພາກ 3:  TB  ແລະ HIV – ການກວດ ແລະ ການກວດຄັດກອງ

HIVເຮັດໃຫ້ລະບົບພູມຕ້ານທານອ່ອນເພັຍລົງ - "ມັນເປີດປະຕູໃຫ້ແກ່ການຕິດເຊື້ອໂຣກອື່ນໆ" - ດັ່ງນັ້ນ ຖ້າທ່ານມີເຊື້ອ HIV ແລະ ເຊື້ອTBແຝງ, ທ່ານກໍ່ມີທາງທີ່ຈະກາຍໄປເປັນເຊື້ອ TBເຄື່ອນໄຫວ.  ຖ້າການຕິດເຊື້ອສອງຢ່າງນີ້ບໍ່ໄດ້ຮັບການປິ່ນປົວ ມັນກໍຈະເຮັດວຽກຮ່ວມກັນເພື່ອກໍ່ໃຫ້ເກີດການເຈັບປ່ວຍທີ່ຮ້າຍແຮງທີ່ສຸດ.

### ເປັນຫຍັງຈຶ່ງເປັນສິ່ງສຳຄັນທີ່ຕ້ອງກວດຫາໂຣກ TB ຖ້າຂ້ອຍມີເຊື້ອHIV?

ຖ້າທ່ານມີເຊື້ອ HIVມັນເປັນສິ່ງສຳຄັນທີ່ຕ້ອງຊອກຮູ້ວ່າທ່ານມີເຊື້ອTBແຝງຫຼືບໍ່ ເພາະວ່າເຊື້ອ TBແຝງນັ້ນມີທາງທີ່ຈະກາຍເປັນເຊື້ອTB ເຄື່ອນໄຫວໄດ້ຫຼາຍທີ່ສຸດໃນບັນດາຜູ້ທີ່ມີເຊື້ອ HIV.  ຖ້າທ່ານມີທັງເຊື້ອTBແຝງ ແລະ ເຊື້ອHIV ທ່ານກໍສາມາດໄດ້ຮັບການປິ່ນປົວ.

### ເປັນຫຍັງຈຶ່ງເປັນສິ່ງສຳຄັນທີ່ຕ້ອງກວດຫາເຊື້ອ HIV ຖ້າຂ້ອຍມີເຊື້ອ TB ເຄື່ອນໄຫວ?

ຖ້າທ່ານມີເຊື້ອTBເຄື່ອນໄຫວ ມັນເປັນສິ່ງສຳຄັນທີ່ຕ້ອງຊອກຮູ້ວ່າທ່ານມີເຊື້ອHIVຫຼືບໍ່ ເພາະວ່າບາງຄັ້ງຜູ້ທີ່ມີເຊື້ອTBເຄື່ອນໄຫວນັ້ນກໍຈະເປັນຜູ້ມີເຊື້ອHIVນຳ. ມັນເປັນສິ່ງສຳຄັນທີ່ຕ້ອງກວດໃຫ້ຮູ້ວ່າຖ້າທ່ານມີທັງເຊື້ອHIV ແລະເຊື້ອTBເຄື່ອນໄຫວ, ທ່ານກໍສາມາດໄດ້ຮັບການປິ່ນປົວ.

### ຂ້ອຍຈະຕ້ອງເຮັດຫຍັງແດ່ເພື່ອກວດເຊື້ອTB?

ມີການກວດເຊື້ອTBແບບທັມມະດາສາມຢ່າງທີ່ສາມາດເຮັດໄດ້ຢູ່ຕາມຄລີນິກກວດໜ້າເອິກໃນຣັດ NSW. ການກວດສາມຢ່າງມີຄື:

- ການກວດວັນນະໂຣກດ້ວຍຜິວໜັງ(TST)ຫຼື ທີ່ເອີ້ນວ່າ ການກວດ Mantoux
- ການຖ່າຍເອັກຊ໌ເຣໜ້າເອິກ
- ການກວດຂີ້ເຖົ່າ (ຖົ່ມ)

ການກວດເຫຼົ່ານີ້ສາມາດຄົ້ນພົບໄດ້ວ່າທ່ານເຄີຍໄດ້ໃກ້ຊິດຕິດພັນກັບTBມາກ່ອນ(TBແຝງ) ຫຼື ທ່ານມີTBເຄື່ອນໄຫວຫຼືບໍ່.

### ຂ້ອຍຕ້ອງມີການກວດແບບໃດສຳລັບHIV?

ການກວດເລືອດສຳລັບ HIV ສາມາດເຮັດໄດ້ຢູ່ຕາມຄລີນິກກວດສຸຂພາບເພດສຳພັນແຫ່ງໃດກໍໄດ້ໃນຣັດNSW ຫຼື ກວດກັບທ່ານໝໍຂອງທ່ານເອງກໍໄດ້.

### ຕ້ອງເສັຍຄ່າຫຍັງບໍ່?

ການກວດເຊື້ອTBທຸກໆຢ່າງຢູ່ຕາມຄລີນິກກວດໜ້າເອິກໃນຣັດNSWແມ່ນຟຣີ.  ທ່ານອາດຈະຕ້ອງໄດ້ເຮັດການນັດໝາຍເພື່ອໄປຫາຄລີນິກ ກວດໜ້າເອິກແຕ່ທ່ານອາດຈະບໍ່ຕ້ອງໃຊ້ບັດ Medicare.

ການກວດເຊື້ອHIVຢູ່ຕາມຄລີນິກກວດສຸຂພາບເພດສຳພັນໃນຣັດNSWແມ່ນຟຣີ ແລະທ່ານບໍ່ຕ້ອງໃຊ້ບັດ Medicare. ການກວດນີ້ຍັງມີຢູ່ຕາມຄລີນິກທ່ານໝໍໃນທ້ອງຖິ່ນຂອງທ່ານ ແຕ່ວ່າທ່ານຕ້ອງໃຊ້ ບັດ Medicare.

## ພາກ 4: ການປິ່ນປົວ TB ແລະ HIV

### ການປິ່ນປົວສຳລັບ TB

ເຊື້ອ TBເຄື່ອນໄຫວສາມາດຖືກປິ່ນປົວແລະຫາຍຂາດໄດ້ໃນບັນດາຜູ້ມີເຊື້ອHIV. TBເຄື່ອນໄຫວ ຈະຖືກປິ່ນປົວດ້ວຍການກິນຢາປະຕິຊີວະນະປະສົມເປັນເວລາ 6 ເດືອນເປັນຢ່າງຕ່ຳ. ພະຍາ ບານຈະຄວບຄຸມເບິ່ງທ່ານກິນຢາTB ເພື່ອກວດເບິ່ງວ່າມີອາການຂ້າງຄຽງໃດໆເກີດຂຶ້ນ ແລະ ເພື່ອໃຫ້ແນ່ໃຈວ່າການປິ່ນປົວນີ້ແລ້ວສົມບູນ.

TBແຝງຊື່ງຢູ່ໃນຄົນທີ່ມີເຊື້ອHIVນັ້ນຖືກປິ່ນປົວດ້ວຍຢາປະຕິຊີວະນະເປັນຊຸດ 6 ເດືອນເພື່ອປ້ອງກັນການກ້າວໄປເປັນTBເຄື່ອນໄຫວ.

### ການປິ່ນປົວໂຣກ HIV

ດຽວນີ້ຍັງບໍ່ມີການປິ່ນປົວສຳລັບໂຣກ HIV ແລະ ໂຣກAIDS, ເຖິງຢ່າງໃດກໍດີ ມີຢາຫຼາຍໆຊະນິດໄດ້ຖືກປຸງແຕ່ງຂຶ້ນເພື່ອຕໍ່ສູ້ກັບໂຣກHIV ແລະ ເຮັດໃຫ້ຄວາມເສັຍຫາຍທີ່ເຊື້ອໄວຣັສກໍ່ຂຶ້ນຕໍ່ລະບົບພູມຕ້ານທານນັ້ນຊ້າລົງ. ດ້ວຍການປິ່ນປົວ, ຫຼາຍໆຄົນທີ່ທີ່ມີເຊື້ອHIVສາມາດຢູ່ໄດ້ດີແລະສືບຕໍ່ຢູ່ຕໍ່ໄປດ້ວຍຊີວິດທີ່ມີສຸຂພາບດີ,ຫຍຸ້ງກັບວຽກງານທົ່ວໄປແລະມີຊີວິດສົມບູນ.

### ຕ້ອງເສັຍຄ່າຫຍັງບໍ່?

ການປິ່ນປົວທຸກໆຢ່າງສຳລັບໂຣກTBແມ່ນຟຣີ. ບໍ່ຕ້ອງໃຊ້ບັດMedicare.

ບັນດາການປິ່ນປົວສຳລັບໂຣກHIV ມີໄວ້ໃຫ້ທຸກໆຄົນທີ່ມີ ບັດMedicare ໂດຍເສັຍຄ່າພຽງເລັກນ້ອຍ.

## ພາກ 5: ຂໍ້ມູນອື່ນໆ

### ການມີໂຣກ HIV ຫຼື TB ຈະກະທົບກະເທືອນ ສະພາບການຍ້າຍຖິ່ນຖານຂອງຂ້ອຍບໍ່?

#### TB:

ການຕິດເຊື້ອໂຣກTBແຝງ ຫຼື TBເຄື່ອນໄຫວ ຈະບໍ່ ກະທົບກະເທືອນຕໍ່ສະພາບການຍ້າຍຖິ່ນຖານເຂົ້າມາຢູ່ໃນອອສເຕຣເລັຍຂອງທ່ານ.

#### HIV:

ຖ້າທ່ານເປັນຜູ້ຢູ່ແບບຖາວອນ ການມີໂຣກHIV ກໍຈະບໍ່ກະທົບກະເທືອນສະພາບການຍ້າຍຖິ່ນຖານຂອງທ່ານ. ເຖິງຢ່າງໃດກໍດີ, ຜູ້ຮ້ອງຂໍຢູ່ແບບ ຖາວອນທຸກໆຄົນຈະຕ້ອງຜ່ານຂໍ້ກຳນົດການກວດສຸຂພາບຊຶ່ງຮວມເຖິງການກວດHIV ແລະ ຖ່າຍເອັກຊເຣໜ້າເອິກ. ກົດໝາຍແລະລະບຽບການກ່ຽວກັບການຂໍເຂົ້າມາຢູ່ແບບຖາວອນນັ້ນແມ່ນຊັບຊ້ອນຫຼາຍ. ສະນັ້ນ ຈຶ່ງເປັນສິ່ງສຳຄັນທີ່ທ່ານຕ້ອງໄດ້ຂໍຄຳແນະນຳຈາກເອເຢັ່ນທີ່ຊ່ຽວຊານທາງດ້ານການຍ້າຍຖິ່ນຖານ ຊຶ່ງມີໃບຮັບຮອງ ຈາກທາງການ.

### ການເກັບເປັນຄວາມລັບ

ການເກັບເປັນຄວາມລັບໝາຍຄວາມວ່າຂໍ້ມູນໃດໆກ່ຽວກັບທ່ານທີ່ທາງບໍຣິການອະນາມັຍໄດ້ຮັບແມ່ນເປັນເລື້ອງສ່ວນຕົວ ແລະ ພວກເຂົາບໍ່ສາມາດເອົາຂໍ້ມູນນັ້ນໄປໃຫ້ຄົນອື່ນໂດຍບໍ່ໄດ້ຮັບຄຳອະນຸຍາດຈາກທ່ານ. ໃນອອສເຕຣເລັຍນີ້ ມັນ ເປັນສິ່ງຜິດກົດໝາຍທີ່ພະນັກງານອະນາມັຍຈະ ເວົ້າລົມເລື້ອງຂໍ້ມູນສ່ວນຕົວຂອງທ່ານກັບຄົນອື່ນ.

### ການໃຊ້ນາຍພາສາ

ທ່ານສາມາດມີນາຍພາສາໄດ້ໃນເວລາທີ່ທ່ານເວົ້າລົມກັບພະນັກງານອະນາມັຍ ຫຼື ບໍຣິການ ອື່ນໆ.
ເຊັ່ນດຽວກັນກັບພະນັກງານອະນາມັຍ, ບັນດານາຍພາສາ ຕ້ອງເກັບຮັກສາຄວາມລັບຂອງທ່ານ.

ດ້ວຍການນຳໃຊ້ນາຍພາສາ ທ່ານຈະສາມາດ:

- ເຂົ້າໃຈທຸກໆຢ່າງທີ່ບອກທ່ານ
- ແນ່ໃຈວ່າທຸກໆຢ່າງທີ່ທ່ານເວົ້າຈະເປັນທີ່ເຂົ້າໃຈ
- ຖາມຄຳຖາມ ແລະ ໄດ້ຮັບຄຳຕອບ
- ເຂົ້າໃຈແລະຍິນຍອມຕໍ່ການກວດ ຫຼື ການປິ່ນປົວ

ນາຍພາສາທາງໂທຣະສັບ(TIS) ມີໄວ້ໃຫ້ຢູ່ ທຸກໆແຫ່ງໃນອອສເຕຣເລັຍ. ຈົ່ງໂທຫາໝາຍເລກ 131 450 (ດ້ວຍຄ່າໂທທ້ອງຖິ່ນ) ແລະ ທ່ານກໍຈະຖືກຕໍ່ເຂົ້າຫາບໍຣິການທີ່ທ່ານຕ້ອງເວົ້ານຳໂດຍມີນາຍພາສາຊ່ວຍ.

## ບັນດາບໍຣິການຕ່າງໆທີ່ສາມາດຊ່ວຍທ່ານໄດ້:

**ຄລີນິກ ກວດໜ້າເອິກ**
ເພື່ອຊອກຫາຄລີນິກກວດໜ້າເອິກທີ່ໃກ້ທ່ານທີ່ສຸດ ຈົ່ງເປີດເບິ່ງ:
www.health.nsw.gov.au/publichealth/in fectious/tb/pdf/chest_clinic/pdf

**ຄລີນິກສຸຂພາບທາງເພດ**
ສຳລັບທີ່ຢູ່ຄລີນິກສຸຂພາບທາງເພດທີ່ໃກ້ບ້ານທ່ານທີ່ສຸດ ໃຫ້ເບິ່ງພາຍໃຕ້ຕົວອັກສອນ 'S' ໃນສມຸດໂທຣະສັບຫົວຂາວ ຫຼື ໂທຫາສາຍໃຫ້ຂໍ້ມູນດ້ານສຸຂພາບທາງເພດ ທີ່ໝາຍເລກ 1800 451 624

**ເພື່ອເອົາຣາຍລະອຽດເພີ້ມຕື່ມກ່ຽວກັບ HIV ເປັນພາສາຂອງທ່ານເອງຈົ່ງເປີດເບິ່ງ:**
ບໍຣິການ ໂຣກເຮັຊໄອວີ/ເອດສ໌ ແລະ ໂຣກຕັບອັກເສບ ປະເພດ C ນາໆວັທນະທັມ
www.multiculturalhivhepc.net.au

**ເພື່ອເອົາຣາຍລະອຽດເພີ້ມຕື່ມກ່ຽວກັບໂຣກTB ເປັນພາສາຂອງທ່ານເອງ ຈົ່ງເປີດເບິ່ງ:**
ບໍຣິການ ການສື່ສານອະນາມັຍນາໆວັທນະທັມ
www.mhcs.nsw.gov.au

**ກະຊວງສາທາຣະນະສຸກ ຣັດ ນິວເຊົາທ໌ເວລສ໌**
www.health.nsw.gov.au/PublicHealth/ Infectious/TB/index.asp